ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ..............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2015
ສະຫງວນລິຂະສິດ

ບົດເຝິກຫັດ

# ໝ່ວຍບ້ານຂອງຂ້ອຍ

ຊັ້ນອະນຸບານສຶກສາປີທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2015

# ປຶ້ມແບບຝຶກຫັດ

# ໜ່ວຍບ້ານຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 2


ຮຽບຮຽງໂດຍ: ແສງມະນີ ສຸພັນທະລີບ
ຊໍ່ເພັດ ຢີງເພັ່ງຊີງ
ພູມະລີ ແສງຈັນນະວົງ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ

ພິມເຂົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ທອງດໍາ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2015

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປື້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 4 ປີ.

ປື້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງບ້ານຂອງຂ້ອຍມີດັ່ງນີ້:

1. ບ້ານ, ສະຖານທີ່ສຳຄັນ ແລະ ບຸກຄົນທີ່ອາໄສຢູ່ພາຍໃນບ້ານ.
2. ອາຊີບ ແລະ ໜ້າທີ່ຂອງບຸກຄົນພາຍໃນບ້ານ.
3. ສິລະປະ ແລະ ວັດທະນະທຳ.
4. ບຸນປະເພນີ ແລະ ວັນສຳຄັນຂອງຊາດ.

ການນຳໃຊ້ປື້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປື້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປື້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນ ຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປື້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

**ໜ້າ**

ກິດຈະກຳການຮຽນ-ການສອນໜ່ວຍ ບ້ານຂອງຂ້ອຍ ........ 1
ບ້ານ, ສະຖານທີ່ສຳຄັນ ແລະ ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ........ 2
ບ້ານ ແລະ ເມືອງທີ່ຕົນອາໄສຢູ່........ 3
ສະຖານທີ່ສຳຄັນພາຍໃນບ້ານ ໂຮງຮຽນ ແລະ ໂຮງໝໍ ........ 4
ສະຖານທີ່ສຳຄັນພາຍໃນບ້ານ ຫ້ອງການບ້ານ ແລະ ຮ້ານຂາຍເຄື່ອງ........ 5
ສະຖານທີ່ສຳຄັນພາຍໃນບ້ານ ຕະຫຼາດ ແລະ ວັດ........ 6
ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ນາຍບ້ານ, ນາຍຄູ, ແພດ, ຄູບາ ........ 7
ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ຊາວນາ, ຊາວສວນ, ພໍ່ຄ້າ ແລະ ແມ່ຄ້າ ........ 8
ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ທະຫານ, ຕຳຫຼວດ, ກຳມະກອນ ........ 9
ການປະຕິບັດຕົນຕໍ່ໝູ່ເພື່ອນ ແລະ ຜູ້ໃຫຍ່ພາຍໃນບ້ານ........10
ການຮັກສາຄວາມສະອາດພາຍໃນບ້ານ........11
ອາຊີບ ແລະ ໜ້າທີ່ບຸກຄົນພາຍໃນບ້ານ ........12
ນາຍຄູ ........13
ແພດ ........14
ຊາວນາ ແລະ ຊາວສວນ........15
ພໍ່ຄ້າ ແລະ ແມ່ຄ້າ ........16
ທະຫານ ........17
ຕຳຫຼວດ ........18
ກຳມະກອນ ........19
ສິລະປະ ແລະ ວັດທະນະທຳ ........20
ຂັບ ແລະ ລຳພື້ນເມືອງ ........21
ເພງພື້ນເມືອງ ........22
ຟ້ອນພື້ນເມືອງ ........23
ເຄື່ອງດົນຕີພື້ນເມືອງ........24
ແບບຫຼິ້ນພື້ນເມືອງ ເຕັ້ນໄຮ່ນາ ........25
ແບບຫຼິ້ນພື້ນເມືອງ ງູກິນຂຽດ ........26
ແບບຫຼິ້ນພື້ນເມືອງ ໝາກຄອນ ........27
ເຄື່ອງຫັດຖະກຳ ຕ່ຳແຜ່ນ ........28

ເຄື່ອງຫັດຖະກຳ ປັ້ນດິນເຜົາ ....................................................................................................29
ເຄື່ອງຫັດຖະກຳ ຈັກສານ ..........................................................................................................30
ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ.....................................................................................31
ວັນຄູ.......................................................................................................................................32
ວັນຊາດ ..................................................................................................................................33
ວັນກຳມະກອນ .........................................................................................................................34
ບຸນເຂົ້າພັນສາ ແລະ ອອກພັນສາ.................................................................................................35
ວັນເດັກ ..................................................................................................................................36

# ກິດຈະກຳການຮຽນ-ການສອນ
# ໜ່ວຍ ບ້ານຂອງຂ້ອຍ



**ຫົວຂໍ້ ການຮຽນຂອງແຕ່ລະອາທິດໜ່ວຍບ້ານຂອງຂ້ອຍ.**

1. ບ້ານ, ສະຖານທີ່ສຳຄັນ ແລະ ບຸກຄົນທີ່ອາໄສຢູ່ພາຍໃນບ້ານ.
2. ອາຊີບ ແລະ ໜ້າທີ່ຂອງບຸກຄົນພາຍໃນບ້ານ.
3. ສິລະປະ ແລະ ວັດທະນະທຳ.
4. ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ.

# ບ້ານ, ສະຖານທີ່ສຳຄັນ ແລະ ບຸກຄົນພາຍໃນບ້ານ



**ຫົວຂໍ້ເນື້ອໃນການຮຽນອາທິດທີ 1 ບ້ານ, ສະຖານທີ່ສຳຄັນ ແລະ ບຸກຄົນທີ່ອາໄສຢູ່ພາຍໃນບ້ານ:**

1. ບ້ານ ແລະ ເມືອງ ທີ່ຕົນອາໄສຢູ່.
2. ສະຖານທີ່ສຳຄັນພາຍໃນບ້ານ ໂຮງຮຽນ, ໂຮງໝໍ, ຫ້ອງການບ້ານ, ຮ້ານຂາຍເຄື່ອງ, ຕະຫຼາດ ແລະ ວັດ.
3. ບຸກຄົນທີ່ອາໄສຢູ່ພາຍໃນບ້ານ, ນາຍບ້ານ, ນາຍຄູ, ແພດ, ພໍ່ຄ້າ, ແມ່ຄ້າ, ຄູບາ, ກຳມະກອນ, ຊາວນາ, ຊາວສວນ, ທະຫານ ແລະ ຕຳຫຼວດ.
4. ການປະຕິບັດຕົນຕໍ່ໝູ່ເພື່ອນ ແລະ ຜູ້ໃຫຍ່ພາຍໃນບ້ານ.
5. ການຮັກສາຄວາມສະອາດພາຍໃນບ້ານ.

# ບ້ານ ແລະ ເມືອງທີ່ຕົນອາໄສຢູ່







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ບ້ານ ແລະ ເມືອງທີ່ເດັກອາໄສຢູ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ບ້ານ ແລະ ເມືອງຂອງຫຼານຊື່ວ່າແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ບ້ານທີ່ຫຼານຢູ່ຊື່ .............................. ແລະ ເມືອງຊື່.....................................
- ໃຫ້ເດັກນ້ອຍທາສີຮູບບ້ານ ໂດຍນຳໃຊ້ສີຕາມໃຈ.

# ສະຖານທີ່ສຳຄັນພາຍໃນບ້ານ ໂຮງຮຽນ ແລະ ໂຮງໝໍ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ສະຖານທີ່ສຳຄັນພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ບ້ານຂອງຫຼານມີໂຮງຮຽນ, ໂຮງໝໍບໍ?
- ໃຫ້ເດັກນ້ອຍສະຫຼຸບ: ສະຖານທີ່ສຳຄັນພາຍໃນບ້ານມີໂຮງຮຽນ, ໂຮງໝໍ ຫຼື ສຸກສາລາ.
- ໃຫ້ເດັກນ້ອຍທາສີຮູບຄົນ, ໂຮງຮຽນ, ໂຮງໝໍ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງການປົກຄອງບ້ານ ແລະ ຮ້ານຂາຍເຄື່ອງ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ສະຖານທີ່ສຳຄັນພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ບ້ານຂອງຫຼານມີຫ້ອງການປົກຄອງບ້ານ ແລະ ຮ້ານຂາຍເຄື່ອງບໍ?
- ໃຫ້ເດັກນ້ອຍສະຫຼຸບ: ສະຖານທີ່ສຳຄັນພາຍໃນບ້ານ ມີຫ້ອງການປົກຄອງບ້ານ ແລະ ຮ້າຍຂາຍເຄື່ອງ.
- ໃຫ້ເດັກນ້ອຍທາສີຮູບ ຮ້ານຂາຍເຄື່ອງ ແລະ ຫ້ອງການປົກຄອງບ້ານ ໂດຍນຳໃຊ້ສີຕາມໃຈ.

# ສະຖານທີ່ສຳຄັນພາຍໃນບ້ານ ຕະຫຼາດ ແລະ ວັດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສະຖານທີ່ສຳຄັນພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ບ້ານຂອງຫຼານມີຕະຫຼາດ ແລະ ວັດບໍ?
- ໃຫ້ເດັກນ້ອຍສະຫຼຸບ: ສະຖານທີ່ສຳຄັນພາຍໃນບ້ານ ມີຕະຫຼາດ ແລະ ວັດ.
- ໃຫ້ເດັກນ້ອຍທາສີຮູບຕະຫຼາດ ແລະ ວັດ ໂດຍນຳໃຊ້ສີຕາມໃຈ.

# ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ນາຍບ້ານ, ນາຍຄູ, ແພດ ແລະ ຄູບາ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນທີ່ອາໄສຢູ່ພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີໃຜແດ່? ບ້ານຂອງຫຼານມີບຸກຄົນເຫຼົ່ານີ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ບຸກຄົນທີ່ອາໄສຢູ່ພາຍໃນບ້ານປະກອບມີ ນາຍບ້ານ, ນາຍຄູ, ແພດ, ຄູບາ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ຊາວນາ, ຊາວສວນ, ພໍ່ຄ້າ ແລະ ແມ່ຄ້າ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນທີ່ອາໄສຢູ່ພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີໃຜແດ່? ບ້ານຂອງຫຼານມີບຸກຄົນເຫຼົ່ານີ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ບຸກຄົນທີ່ອາໄສຢູ່ພາຍໃນບ້ານປະກອບມີ ຊາວນາ, ຊາວສວນ, ພໍ່ຄ້າ ແລະ ແມ່ຄ້າ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ບຸກຄົນທີ່ອາໄສຢູ່ພາຍໃນບ້ານ ທະຫານ, ຕຳຫຼວດ ແລະ ກຳມະກອນ


ກຳມະກອນ


ທະຫານ


ຕຳຫຼວດ

**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນທີ່ອາໄສຢູ່ພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີໃຜແດ່? ບ້ານຂອງຫຼານມີບຸກຄົນເຫຼົ່ານີ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບບຸກຄົນທີ່ອາໄສຢູ່ໃນບ້ານປະກອບມີ ທະຫານ, ຕຳຫຼວດ ແລະ ກຳມະກອນ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນຕໍ່ໝູ່ເພື່ອນ ແລະ ຜູ້ໃຫຍ່ພາຍໃນບ້ານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນຕໍ່ໝູ່ເພື່ອນ ແລະ ຜູ້ໃຫຍ່ພາຍໃນບ້ານຕົນເອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຄວນປະຕິບັດຕົນແນວໃດ ເວລາຫຼິ້ນກັບໝູ່ເພື່ອນ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນ ຮັກແພງ, ແບ່ງປັນສິ່ງຂອງ, ຫຼິ້ນຮ່ວມກັນກັບໝູ່ເພື່ອນ ແລະ ຟັງຄວາມຜູ້ໃຫຍ່.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ, ຕົ້ນໄມ້ ແລະ ເຮືອນ ໂດຍນຳໃຊ້ສີຕາມໃຈ.

# ການຮັກສາຄວາມສະອາດພາຍໃນບ້ານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຮັກສາຄວາມສະອາດພາຍໃນບ້ານຕົນເອງ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຄົນກໍາລັງເຮັດຫຍັງ? ຄວນຮັກສາຄວາມສະອາດພາຍໃນບ້ານແນວໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ການຮັກສາຄວາມສະອາດພາຍໃນບ້ານ ທີ່ເດັກນ້ອຍອາໄສຢູ່ເກັບຂີ້ເຫຍື້ອ ແລະ ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ອາຊີບ ແລະ ໜ້າທີ່ບຸກຄົນພາຍໃນບ້ານ



**ຫົວຂໍ້ ເນື້ອໃນການຮຽນ ອາທິດທີ 2 ອາຊີບ ແລະ ໜ້າທີ່ຂອງບຸກຄົນພາຍໃນບ້ານ:**

1. ນາຍຄູ ແລະ ແພດ.
2. ຊາວນາ ແລະ ຊາວສວນ.
3. ພໍ່ຄ້າ ແລະ ແມ່ຄ້າ.
4. ທະຫານ ແລະ ຕຳຫຼວດ.
5. ກຳມະກອນ.

# ນາຍຄູ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກອາຊີບ ແລະ ໜ້າທີ່ຂອງນາຍຄູ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ນາຍຄູມີໜ້າທີ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບນາຍຄູ ມີໜ້າທີ່ນໍາພາເດັກຫຼິ້ນ ແລະ ພາເຄື່ອນໄຫວກິດຈະກໍາການຮຽນຕ່າງໆ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ນາຍຄູ ໂດຍນໍາໃຊ້ສີຕາມໃຈ.

# ແພດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກໜ້າທີ່ຂອງແພດ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ແພດມີໜ້າທີ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບແພດ ມີໜ້າທີ່ກວດສຸຂະພາບ ແລະ ປິ່ນປົວຄົນເຈັບ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ຊາວນາ ແລະ ຊາວສວນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກອາຊີບ ໜ້າທີ່ຂອງຊາວນາ ແລະ ຊາວສວນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຊາວນາ ແລະ ຊາວສວນມີໜ້າທີ່ ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບຊາວນາມີໜ້າທີ່ປູກເຂົ້າ ແລະ ຊາວສວນປູກຜັກ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ພໍ່ຄ້າ ແລະ ແມ່ຄ້າ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກໜ້າທີ່ຂອງພໍ່ຄ້າ ແລະ ແມ່ຄ້າ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ພໍ່ຄ້າ ແລະ ແມ່ຄ້າມີໜ້າທີ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບພໍ່ຄ້າ ແລະ ແມ່ຄ້າມີໜ້າທີ່ຂາຍເຄື່ອງໃຊ້, ເຄື່ອງກິນ, ເຄື່ອງນຸ່ງ ແລະ ເຄື່ອງຮຽນ.
- ໃຫ້ເດັກນ້ອຍທາສີຮູບຄືນ ໂດຍນຳໃຊ້ສີຕາມໃຈ.

# ທະຫານ



**ຈຸດປະສົງ**: ເພື່ອໃຫ້ເດັກນ້ອຍບອກອາຊີບ ແລະ ໜ້າທີ່ຂອງທະຫານ.

**ກິດຈະກໍາ**:

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ທະຫານມີໜ້າທີ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບທະຫານມີໜ້າທີ່ປົກປັກຮັກສາເຂດນໍ້າແດນດິນພູຜາປ່າໄມ້ຂອງປະເທດຊາດ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ຕຳຫຼວດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກອາຊີບໜ້າທີ່ຂອງຕຳຫຼວດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຕຳຫຼວດມີໜ້າທີ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບຕຳຫຼວດມີໜ້າທີ່ປ້ອງກັນຄວາມສະຫງົບຂອງບ້ານເມືອງ ແລະ ອຳນວຍຄວາມສະດວກໃນການສັນຈອນ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ກຳມະກອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກອາຊີບໜ້າທີ່ຂອງກຳມະກອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ກຳມະກອນມີໜ້າທີ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາຊີບກຳມະກອນມີໜ້າທີ່, ປຸກສ້າງ, ສ້ອມແປງ, ເຮືອນ, ຖະໜົນ ແລະ ຜະລິດເຄື່ອງໃຊ້.
- ໃຫ້ເດັກນ້ອຍທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ສິລະປະ ແລະ ວັດທະນະທຳ



**ຫົວຂໍ້ ເນື້ອໃນການຮຽນອາທິດທີ 3 ສິລະປະ ແລະ ວັດທະນະທຳ:**

1. ຂັບ ແລະ ລຳພື້ນເມືອງ.
2. ເພງ ແລະ ຟ້ອນພື້ນເມືອງ.
3. ເຄື່ອງດົນຕີພື້ນເມືອງ.
4. ແບບຫຼິ້ນພື້ນເມືອງ.
5. ເຄື່ອງຫັດຖະກຳພື້ນເມືອງ.

# ຂັບ ແລະ ລຳພື້ນເມືອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ຂັບ, ລຳພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂັບ ແລະ ລຳບໍ່?
- ໃຫ້ເດັກນ້ອຍສະຫຼຸບ: ຊື່ ຂັບ, ລຳພື້ນເມືອງມີ ຂັບຊຳເໜືອ, ຂັບທຸ້ມຫຼວງພະບາງ, ຂັບງື່ມ ລຳສີພັນດອນ, ລຳຄອນສະຫວັນ, ລຳຕັ່ງຫວາຍ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເພງພື້ນເມືອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເພງພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍຮ້ອງເພງບໍ?, ມີຊື່ເພງວ່າແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ໃຊ້ເພັງພື້ນເມືອງ ເພງຈຳປາເມືອງລາວ ແລະ ດອກບົວທອງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ຟ້ອນພື້ນເມືອງ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຟ້ອນພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍຟ້ອນບໍ? ບົດຟ້ອນໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຊື່ຟ້ອນພື້ນເມືອງມີ ຟ້ອນອວຍພອນ, ຟ້ອນຈຳປາເມືອງລາວ, ຟ້ອນລາວແພນ ແລະ ລຳວົງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງດົນຕີພື້ນເມືອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງດົນຕີພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນເຄື່ອງດົນຕີ ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງດົນຕີພື້ນເມືອງ ມີແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ, ຂຸ່ຍ, ຄ້ອງ ແລະ ເຄື່ອງດົນຕີໃນທ້ອງຖິ່ນ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງດົນຕີພື້ນເມືອງ ໂດຍນຳໃຊ້ສີຕາມໃຈ.

# ແບບຫຼິ້ນພື້ນເມືອງ ເຕັ້ນໄຮ່ນາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ແບບຫຼິ້ນພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍຫຼິ້ນແບບຫຼິ້ນແນວນີ້ບໍ? ແບບຫຼິ້ນທີ່ຫຼານຮູ້ຈັກ ມີແບບໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ແບບຫຼິ້ນພື້ນເມືອງມີ ຫຼິ້ນເຕັ້ນໄຮ່ນາ ແລະ ແບບຫຼິ້ນຕ່າງໆທີ່ຕົນຮູ້ຈັກ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ແບບຫຼິ້ນພື້ນເມືອງ ງູກິນຂຽດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ແບບຫຼິ້ນພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງຫຼິ້ນຫຍັງ? ຫຼານເຄີຍຫຼິ້ນແບບນີ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ແບບຫຼິ້ນພື້ນເມືອງມີ ຫຼິ້ນງູກິນຂຽດ ແລະ ແບບຫຼິ້ນຕ່າງໆທີ່ຕົນຮູ້ຈັກ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍໃຊ້ສີຕາມໃຈ.

# ແບບຫຼິ້ນພື້ນເມືອງ ໝາກຄອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ແບບຫຼິ້ນພື້ນເມືອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍຫຼິ້ນແບບຫຼິ້ນແນວນີ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ແບບຫຼິ້ນພື້ນເມືອງມີ ຫຼິ້ນໝາກຄອນ ແລະ ແບບຫຼິ້ນຕ່າງໆທີ່ຕົນຮູ້ຈັກ.
- ໃຫ້ເດັກນ້ອຍທາສີຮູບຄົນໂດຍໃຊ້ສີຕາມໃຈ.

# ເຄື່ອງຫັດຖະກຳຕ່ຳແຜ່ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫັດຖະກຳຕ່ຳແຜ່ນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານມີຜ້າແບບໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຫັດຖະກຳຕຳແຜ່ນມີ ຜ້າສະໂຫຼ້ງ, ສິ້ນ, ຜ້າບ່ຽງ ແລະ ຜ້າອື່ນໆ?
- ໃຫ້ເດັກນ້ອຍທາສີຜ້າສະໂຫຼ້ງ, ສິ້ນ ແລະ ຜ້າບ່ຽງ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫັດຖະກຳພື້ນເມືອງ ປັ້ນດິນເຜົາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫັດຖະກຳປັ້ນດິນເຜົາ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍເຫັນໄຫ, ໂຖດອກໄມ້ ແລະ ໝໍ້ບໍ? ໄຫໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງຫັດຖະກຳປັ້ນດິນເຜົາ ມີໄຫ, ໂຖດອກໄມ້ ແລະ ໝໍ້.
- ໃຫ້ເດັກນ້ອຍທາສີຮູບໄຫ, ໂຖດອກໄມ້ ແລະ ໝໍ້ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫັດຖະກຳພື້ນເມືອງຈັກສານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫັດຖະກຳຈັກສານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ກະຕິບເຂົ້າໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ຫັດຖະກຳຈັກສານ ມີກະດົ້ງ, ຂ້ອງ, ໄຊ, ກະຕິບເຂົ້າ ແລະ ຫວດ.
- ໃຫ້ເດັກນ້ອຍທາສີຮູບກະດົ້ງ, ຂ້ອງ, ໄຊ, ຕິບເຂົ້າ ແລະ ຫວດ ໂດຍນຳໃຊ້ສີຕາມໃຈ.

# ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ









**ຫົວຂໍ້ ເນື້ອໃນການຮຽນ ອາທິດທີ 4 ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ. ປະກອບມີ:**

1. ວັນຄູ.
2. ວັນຊາດ.
3. ວັນກຳມະກອນ.
4. ບຸນເຂົ້າ ແລະ ອອກພັນສາ.
5. ວັນເດັກ.

# ວັນຄູ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການສະເຫຼີມສະຫຼອງ ວັນຄູ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍມອບດອກໄມ້ໃຫ້ນາຍຄູບໍ? ວັນຄູກົງກັບວັນທີ, ເດືອນໃດ?
- ໃຫ້ເດັກນ້ອຍສະຫຼຸບ: ວັນຄູ ກົງກັບວັນທີ່ 7 ເດືອນຕຸລາ; ການສະເຫຼີມສະຫຼອງວັນຄູແມ່ນອວຍພອນ, ມອບຊໍ່ດອກໄມ້, ແຂ່ງຂັນກິລາ ແລະ ສະແດງສິລະປະຕ່າງໆ.
- ໃຫ້ເດັກນ້ອຍທາສີຮູບຄືນ ໂດຍນຳໃຊ້ສີຕາມໃຈ.

# ວັນຊາດ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການສະເຫຼີມສະຫຼອງ ວັນຊາດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນທຸງຊາດລາວ ບໍ? ວັນຊາດກົງກັບວັນທີ, ເດືອນໃດ?
- ໃຫ້ເດັກນ້ອຍສະຫຼຸບ: ວັນຊາດກົງກັບວັນທີ່ 2 ເດືອນທັນວາ; ການປະດັບປະດາອາຄານສະຖານທີ່, ທຸງຊາດ, ທຸງທິວ, ຄຳຂວັນ; ການສະເຫຼີມສະຫຼອງໂຮມຊຸມນຸມຟັງປາຖະກະຖາ, ສະແດງຜົນງານການເຄື່ອນໄຫວວຽກງານພາຍໃນ, ຕ່າງປະເທດ ຂອງທຸກຂະແໜງການໃນແຕ່ລະໄລຍະ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ວັນກຳມະກອນ



**ຈຸດປະສົງ**: ເພື່ອໃຫ້ເດັກນ້ອຍບອກວັນທີ, ເດືອນ ແລະ ການສະເຫຼີມສະຫຼອງ ວັນກຳມະກອນ.

**ກິດຈະກຳ**:

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັນກຳມະກອນ ກົງກັບວັນທີ, ເດືອນໃດ?
- ໃຫ້ເດັກນ້ອຍສະຫຼຸບ: ວັນກຳມະກອນກົງກັບວັນທີ່ 1 ເດືອນພຶດສະພາ; ການສະເຫຼີມສະຫຼອງວັນ ກຳມະກອນແມ່ນອວຍພອນກຳມະກອນ ແລະ ມອບຊໍ່ດອກໄມ້.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ບຸນເຂົ້າພັນສາ ແລະ ອອກພັນສາ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການສະເຫຼີມສະຫຼອງບຸນເຂົ້າພັນສາ, ອອກພັນສາ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ບຸນເຂົ້າພັນສາ ກົງກັບເດືອນກໍລະກົດ ຫຼື ເດືອນ 8 ເພັງ ວັນທາງ ພະພຸດທະສາດສະໜາ; ວັນອອກພັນສາ ກົງກັບເດືອນຕຸລາ ຫຼື ເດືອນ 11 ເພັງ; ການສະເຫຼີມສະຫຼອງໃສ່ບາດ, ຊ່ວງເຮືອ, ໄຫຼເຮືອໄຟ ແລະ ມ່ວນຊື່ນໃນມື້ບຸນ.
- ໃຫ້ເດັກນ້ອຍທາສີຮູບຄູບາ ແລະ ຄົນຊ່ວງເຮືອ ໂດຍໃຊ້ສີຕາມໃຈ.

# ວັນເດັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການສະເຫຼີມສະຫຼອງວັນເດັກ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັນເດັກກົງກັບວັນທີ, ເດືອນໃດ?
- ໃຫ້ເດັກນ້ອຍສະຫຼຸບ: ວັນເດັກກົງກັບວັນທີ 1 ເດືອນມິຖຸນາ; ການສະເຫຼີມສະຫຼອງວັນເດັກແມ່ນສະແດງສິລະປະວັນນະຄະດີ, ແຂ່ງຂັນກິລາ ແລະ ມອບຂອງຂວັນໃຫ້ເດັກ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນໍາໃຊ້ສີຕາມໃຈ.